## ກິດຈະກຳທີ່ຈະບໍ່ໄດ້ຮັບການສະໜັບສະໜູນຈາກຄສລ

ຜູ້ຂໍທຶນຕ້ອງຮັບຮູ້ວ່າ ບາງກິດຈະກຳ ຈະບໍ່ໄດ້ຮັບການສະໜັບສະໜູນດ້ານທຶນຮອນຈາກ 2 ບ້ວງສະໜອງທຶນຂອງໂຄງການ ເຊິ່ງລວມ ມີ:

- ກິດຈະກຳໃດໜຶ່ງ ທີ່ຈຳເປັນຕ້ອງເຮັດ ການປະເມີນຜົນກະທົບດ້ານສິ່ງແວດລ້ອມຢ່າງຮອບດ້ານ ພາຍໃຕ້ລະບຽບກົດໝາຍ ຂອງ ສປປລາວ ແລະ ທະນາຄານໂລກ;
- ກິດຈະກຳຕ່າງໆ ທີ່ມີການເວນຄືນທີ່ດິນ, ການທຳລາຍຊັບສິນ ຫຼື ມີການຍົກຍ້າຍຈັດສັນປະຊາຊົນ;
- ການຈັດຊື້ອຸປະກອນຂະໜາດໃຫ່ຍເຊັ່ນ: ພາຫະນະ (ລົດເກງ, ລົດກະບະ, ອື່ນໆ), ສິນຄ້າ ແລະ ອຸປະກອນອື່ນໆ;
- ວຽກກໍ່ສ້າງຂະໜາດໃຫຍ່;
- ບັນດາກິດຈະກຳທີ່ມີຜົນກະທົບທີ່ຮ້າຍແຮງຕໍ່ທຸລະກິດ, ອາຊີບ, ວຽກງານ, ທີ່ຢູ່ອາໄສ ຂອງຄົນ, ຖິ່ນອາໄສຂອງສັດ ຫຼື ມາດຕະຖານການດຳລົງຊີວິດ ຂອງ ປະຊາຊົນບັນດາເຜົ່າ;
- ການພັດທະນາບ້ານ ທີ່ເປັນການທຳລາຍສິ່ງແວດລ້ອມ ແລະ ການອະນຸ້ກທຳມະຊາດອັນສຳຄັນ.

## ຂັ້ນຕອນການສະເໜີຂໍທຶນ

ການສະເໜີຂໍທຶນທັງຂະໜາດໃຫຍ່ ແລະ ນ້ອຍ ສາມາດຍື່ນຫາໜ່ວຍງານຄຸ້ມຄອງໂຄງການໄດ້ທຸກເວລາລັດຖະການ. ຜູ້ຂໍທຶນຂະໜາດນ້ອຍສາມາດຍືນຄຳຮ້ອງຕາມແບບຟອມມາດຕະຖານໄດ້ນຳ ຜູ້ອຳນວຍຄວາມສະດວກຂອງໂຄງການ ໃນແຕ່ລະແຂວງ ເພື່ອພິຈາລະນາເບື້ອງຕົ້ນ ແລະ ໃຫ້ຄຳເຫັນ. ພາຍຫຼັງປຶກສາຫາລືແລ້ວກໍ່ອາດສົ່ງຫາໜ່ວຍງານຄຸ້ມຄອງຂອງໂຄງການເພື່ອກັ່ນກອງ. ຖ້າບົດສະເໜີຫາກຍັງບໍ່ໄດ້ຕາມເງື່ອນໄຂພື້ນຖານ, ຜູ້ສະເໜີ ກໍ່ສາມາດຂໍການຊ່ວຍເຫຼືອ ດ້ານວິຊາການຈາກຜູ້ອຳນວຍຄວາມສະດວກຂອງໂຄງການຢູ່ແຂວງຕົນເອງ ມາປັບປຸງແລ້ວກໍ່ສາມາດຍື່ນບົດນັ້ນຄືນໃໝ່.

ຖ້າບຸກຄົນໃດ ຫຼື ອົງການໃດມີຄວາມສົນໃຈຢາກສະເໜີຂໍທຶນແມ່ນສາມາດສອບຖາມເອົາລາຍລະອຽດໄດ້ຕື່ມຈາກ ໜ່ວຍງານຄຸ້ມຄອງໂຄງການເພື່ອເຮັດໃຫ້ໄດ້ຮັບທຶນນັ້ນ. ການໃຫ້ທຶນຊ່ວຍເຫຼືອລ້າຈະໄດ້ມີການຕິດຕາມກວດກາຕາມມາດຕະຖານທີ່ໄດ້ລະບຸໄວ້ໃນ ສັນຍາຊ່ວຍເຫຼືອລ້າ ທີ່ຈະໄດ້ເຊັນກັນລະຫ່ວາງ ກປສ ແລະ ຜູ້ຂໍທຶນ.

## ການຍື່ນບົດສະເໜີ ແລະ ບ່ອນຂໍຂໍ້ມູນເພີ້ມ

ບົດສະເໜີສາມາດຍື່ນໄດ້ທຸກເວລາ. ບົດສະເໜີສຸດທ້າຍຢ່າງໜ້ອຍຕ້ອງ ເຮັດຕາມໜຶ່ງໃນແບບຟອມຄຳຮ້ອງມາດຕະຖານ ຂອງໂຄງການຊຶ່ງມີດັ່ງນີ້:

- ຄຳຮ້ອງ ຂໍທຶນຊ່ວຍເຫຼືອລ້າ ຈາກບ້ວງ "ຈັດຕັ້ງປະຕິບັດ ນະໂຍບາຍ ແລະ ປັບປຸງຄວາມສາມາດ" ຂະໜາດນ້ອຍ (ບໍ່ເກີນ 10.000 ໂດລາ),
- ຄຳຮ້ອງ ຂໍທຶນຊ່ວຍເຫຼືອລ້າ ຈາກບ້ວງ "ຈັດຕັ້ງປະຕິບັດນະໂຍບາຍ ແລະ ປັບປຸງຄວາມອາດສາມາດ" ຂະໜາດໃຫຍ່ (ເກີນ 10.000 ໂດລາ),
- ຄຳຮ້ອງ ຂໍທຶນຊ່ວຍເຫຼືອລ້າ ຈາກບ້ວງ "ລົງທຶນແກ່ຊີວະນາໆພັນ ແລະ ຊຸມຊົນ" ຂະໜາດນ້ອຍ (ບໍ່ເກີນ 10.000 ໂດລາ),
- ຄຳຮ້ອງ ຂໍທຶນຊ່ວຍເຫຼືອລ້າຈາກບ້ວງ "ລົງທຶນແກ່ຊີວະນາໆພັນ ແລະ ຊຸມຊົນ" ຂະໜາດໃຫຍ່ (ເກີນ 10.000 ໂດລາ),
- ຄຳຮ້ອງ ຂໍທຶນຊ່ວຍເຫຼືອລ້າ ກ່ຽວກັບການປົກປັກຮັກສາປ່າສະຫງວນ ຂະໜາດນ້ອຍ (ບໍ່ເກີນ 10.000 ໂດລາ).

ແບບຟອມ ຄຳຮ້ອງດັ່ງກ່າວ ສາມາດຂໍໄດ້ທີ່ໂຄງການ ແລະ ສາມາດເອົາໄດ້ ຈາກເວັບໄຊຂອງ ກປສ: Http://www.laoepf.org.la/lens. ເພື່ອຍື່ນບົດສະເໜີ ຫຼື ຢາກສອບຖາມເອົາຂໍ້ມູນເພີ້ມ ສາມາດຕິດຕໍ່ໄດ້ທີ່:

ກອງທຶນປົກປັກຮັກສາສິ່ງແວດລ້ອມ
ໂຄງການສິ່ງແວດລ້ອມ ແລະ ສັງຄົມ ຢູ່ ສປປ ລາວ
ຊັ້ນທີ່ ໜຶ່ງ, ຕຶກ ອວຕສ, ຖະໜົນ ສີດຳດວນ
ບ້ານ ສີສະຫວາດ, ເມືອງ ຈັນທະບູລີ
ຕູ້ ປນ: 7647, ນະຄອນຫຼວງວຽງຈັນ
ໂທລ: 021 251947
ແຟັກ: 021 251946
http://www.laoepf.org.la/lens.

# ກອງທຶນປົກປັກຮັກສາສິ່ງແວດລ້ອມ

## ໂຄງການ ສິ່ງແວດລ້ອມແລະສັງຄົມ ຢູ່ ສປປ ລາວ



ພະຈິກ 2006

## ຄວາມເປັນມາ

ໂຄງການສິ່ງແວດລ້ອມ ແລະ ສັງຄົມ ຢູ່ສປປ ລາວ (ຄສລ) ໄດ້ສ້າງຂຶ້ນ ໃນຖານະເປັນກິດຈະກຳເພີ່ມໃສ່ ໂຄງການນ້ຳເທີນ 2 ຕາມທີ່ໄດ້ກຳນົດໃນຈົດໝາຍຂອງລັດຖະບານ ສປປລາວ ກ່ຽວກັບນະໂຍບາຍຈັດຕັ້ງປະຕິບັດໂຄງການນ້ຳເທີນ 2 ເຊັນໂດຍ ທ່ານ ຮອງນາຍົກລັດຖະມົນຕີ.

ໂຄງການດັ່ງກ່າວ ໄດ້ຮັບການສະໜັບສະໜູນຈາກທະນາຄານໂລກ ຕາມສັນຍາຊ່ວຍເຫຼືອລ້າເພື່ອການພັດທະນາ ເລກທີ H177-LA ທີ່ໄດ້ເຊັນກັນ ລະຫ່ວາງ ລັດຖະບານ ແຫ່ງ ສປປ ລາວ (ຕາງໜ້າໂດຍກະຊວງການເງິນ) ແລະ ສາມະຄົມເພື່ອການພັດທະນາສາກົນ (ທະນາຄານໂລກ) ໃນວັນທີ 15 ສິງຫາ 2005.

ກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ໄດ້ຖືກສ້າງຕັ້ງຂຶ້ນໃນປີ 2005 ໂດຍເປັນອົງການທີ່ກຸ້ມຕົນເອງທາງດ້ານການເງິນ ແລະ ການບໍລິຫານ, ເພື່ອແນໃສ່ເປົ້າໝາຍ ສ້າງຄວາມເຂັ້ມແຂງໃນການປົກປັກຮັກສາສິ່ງແວດລ້ອມ, ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ, ການປົກປັກຮັກສາຊີວະນາໆພັນ ແລະ ການພັດທະນາຊຸມຊົນຢູ່ ສປປ ລາວ.

## ຈຸດປະສົງຂອງ ຄສລ

ຈຸດປະສົງຕົ້ນຕໍຂອງ ຄສລ ແມ່ນ "ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງ ສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ ຢູ່ສປປ ລາວ ເພື່ອຮັບປະກັນຄຸນນະພາບຂອງການເຕີບໂຕ ທາງດ້ານເສດຖະກິດ ແລະ ຫຼຸດຜ່ອນຄວາມທຸກຍາກໃຫ້ໄດ້ດີຂຶ້ນ ແລະ ມີຈຸດປະສົງສະເພາະດັ່ງນີ້:

☞ ປັບປຸງການຈັດຕັ້ງ ແລະ ເຄື່ອງມື ສຳຫລັບການປະເມີນຜົນກະທົບ, ການຕິດຕາມກວດກາ ແລະ ການປະຕິບັດຕາມລະບຽບກົດໝາຍ ເພື່ອຄວາມຍືນຍົງທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ເພື່ອສ້າງພື້ນຖານສຳລັບການປ່ຽນແປງທາງດ້ານສິ່ງແວດລ້ອມ;

☞ ລົງທຶນໃສ່ກິດຈະການປັບປຸງສິ່ງແວດລ້ອມຢູ່ຮາກຖານ ທີ່ໄດ້ກຳນົດໃນຍຸດທະສາດສຳລັບການຂະຫຍາຍຕົວແລະລົບລ້າງຄວາມທຸກຍາກ ຊຶ່ງກວມເອົາ ການປົກປັກຮັກສາຊີວະນາໆພັນ ແລະ ການພັດທະນາຊຸມຊົນ;

☞ ຊ່ວຍກອງທຶນປົກປັກຮັກສາສິ່ງແວດລ້ອມ ໃຫ້ສາມາດເຄື່ອນໄຫວໄດ້ ຈົນກາຍເປັນອົງການປະຈຳ ທີ່ມີສິດນຳໃຊ້ລາຍໄດ້ຈາກໂຄງການໄຟຟ້ານ້ຳເທີນ 2 ເຂົ້າໃນວຽກງານປົກປັກຮັກສາສິ່ງແວດລ້ອມ ທີ່ເປັນບູລິມະສິດຂອງປະເທດ.

ໜ່ວຍງານຄຸ້ມຄອງໂຄງການ ທີ່ມີຫ້ອງການຢູ່ໃນບໍລິເວນ ສຳນັກງານນາຍົກລັດຖະມົນຕີ ໄດ້ຖືກມອບໝາຍໃຫ້ເປັນຜູ້ຈັດຕັ້ງປະຕິບັດ ແລະ ຄຸ້ມຄອງສອງບ້ວງດັ່ງກ່າວ. ຄະນະກຳມະການຊີ້ນຳໂຄງການ ໂດຍມີທ່ານຮອງຫົວໜ້າ ອົງການ ວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ເປັນປະທານ ຍັງໃຫ້ທິດທາງແລະການສະໜັບສະໜູນ ໜ່ວຍງານດັ່ງກ່າວ.

## ບ້ວງວິຊາການສະໜອງທຶນ ຂອງຄລສ

ເພື່ອບັນລຸຄາດໝາຍຂອງໂຄງການ, ກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ໄດ້ສ້າງຕັ້ງບ້ວງສະໜອງທຶນສະເພາະຂຶ້ນສອງບ້ວງ ຄື: ບ້ວງ "ຈັດຕັ້ງປະຕິບັດນະໂຍບາຍແລະປັບປຸງຄວາມສາມາດ" ແລະ ບ້ວງ "ລົງທຶນແກ່ຊີວະນາໆພັນ ແລະ ຊຸມຊົນ".

ບ້ວງສະໜອງທຶນສະເພາະ "ຈັດຕັ້ງປະຕິບັດນະໂຍບາຍ ແລະ ປັບປຸງຄວາມສາມາດ" ແນໃສ່ສະໜັບສະໜູນກິດຈະການ ແລະ ແຜນການຕ່າງໆ ໃນ 5 ຂົງເຂດວຽກງານດັ່ງນີ້:

1.ວຽກງານຕິດຕາມກວດກາ ດ້ານສິ່ງແວດລ້ອມ ແລະ ສັງຄົມ ແລະ ການຈັດຕັ້ງຜັນຂະຫຍາຍ ບູນດານະໂຍບາຍ ດ້ານສິ່ງແວດລ້ອມ (ສະຫນູບສະຫນູນການຕິດຕາມກວດ ການປ້ອງກັນຜົນກະທົບ);

2.ວຽກງານ ການຄຸ້ມຄອງອ່າງຮັບນ້ຳ ແບບປະສົມປະສານ;

3.ວຽກງານ ນະໂຍບາຍ ດ້ານພະລັງງານໄຟຟ້ານ້ຳຕົກ;

4.ວຽກງານ ຄຸ້ມຄອງຜົນກະທົບ ຕໍ່ສັງຄົມ (ສະຫນັບສະຫນູນນະໂຍບາຍການຍົກຍ້າຍຈັດສັນປະຊາຊົນ ແລະ ການທົດແທນຄ່າເສຍຫາຍ);

5.ວຽກງານ ການສຶກສາ ແລະ ສ້າງຈິດສຳນຶກ ດ້ານສິ່ງແວດລ້ອມ.

ບ້ວງສະໜອງສະເພາະ "ລົງທຶນແກ່ຊີວະນາໆພັນ ແລະ ຊຸມຊົນ" ແນໃສ່ສະໜັບສະໜູນກິດຈະການແລະແຜນການຕ່າງໆ ຢືສາມແຂວງເປົ້າໝາຍ (ບໍລິຄຳໄຊ, ຄຳມ່ວນ ແລະ ສະຫ້ວນນະເຂດ):

☞ ສ້າງຄວາມເຂັ້ມແຂງໃນຄຸ້ມຄອງ ປ່າສະຫງວນ ໃຫ້ຊຸມຊົນ;

☞ ຮັບປະກັນ ເຮັດໃຫ້ຊຸມຊົນມີຊີວິດການເປັນຢູ່ຂຶ້ນກັບປ່າສະຫງວນໃຫ້ຍືນຍົງຂຶ້ນ;

☞ ລົງທຶນເຂົ້າໃນກິດຈະການປັບປຸງສິ່ງແວດລ້ອມຢູ່ຮາກຖານ ໃນຊຸມຊົນທີ່ທຸກຍາກ ໂດຍແນໃສ່ການອະນຸລັກຊີວະນາໆພັນ, ການຄຸ້ມຄອງສິ່ງແວດລ້ອມຂອງຊຸມຊົນ, ປັບປຸງຊີວິດການເປັນຢູ່ ແລະ ການສົ່ງເສີມການທ່ອງທ່ຽວທຳມະຊາດ.

ການຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດບ້ວງສະຫນອງທຶນສະເພາະສອງບ້ວງນີ້ ແມ່ນຂຶ້ນກັບຫນ່ວຍງານຄຸ້ມຄອງ ໂຄງການສິ່ງແວດລ້ອມ ແລະ ສັງຄົມ ຢູ່ ສປປລາວ, ເຊິ່ງມີຫ້ອງການຕັ້ງຢູ່ອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ. ປະກອບມີຄະນະກຳມະການຊີ້ນຳໂຄງການທີ່ມາຈາກຫຼາຍພາກສ່ວນ ທີ່ກ່ຽວຂ້ອງ ໂດຍແມ່ນທ່ານ ຮອງຫົວຫນ້າ ອວຕສ ເປັນປະທານເພື່ອໃຫ້ການຊີ້ນຳທາງດ້ານນະໂຍບາຍ ແລະ ເຕັກນິກ.

## ຂອບເຂດຂອງການສະໜອງທຶນ

ທຶນຊ່ວຍເຫຼືອລ້າຈະໃຫ້ໄດ້ກໍ່ຕໍ່ເມື່ອໄດ້ຮັບ: (1) ການພິຈາລະນາ ແລະ ເຫັນດີຮັບຮອງເອົາ ບົດສະເຫນີໂດຍ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ (2) ຄວາມພຽບພ້ອມໃນການສະໜອງທຶນຂອງສອງກອງທຶນຍ່ອຍດັ່ງກ່າວ. ເພື່ອຮັບປະກັນວ່າ ບົດສະເຫນີຂໍທຶນນັ້ນຈະຕ້ອງປະກອບສ່ວນເຮັດໃຫ້ ຈຸດປະສົງຂອງ ໂຄງການສິ່ງແວດລ້ອມ ແລະ ສັງຄົມ ຢູ່ ສປປລາວ ບັນລຸໄດ້, ຈຶ່ງໄດ້ວາງມາດຕະຖານພື້ນຖານໃນການຄັດເລືອກດັ່ງນີ້:

✎ ບົດສະເຫນີໄດ້ປະກອບສ່ວນເຂົ້າໃນກິດຈະກຳ ແລະ ເປົ້າຫມາຍຂອງໂຄງການສິ່ງແວດລ້ອມ ແລະ ສັງຄົມ ຢູ່ ສປປລາວ ແລະ ກິດຈະກຳຕ່າງໆ ຂອງໂຄງການ;

✎ ປະສານສົມທົບກັບໂຄງການອື່ນໆ ທີ່ດຳເນີນງານ ຢູ່ໃນຂົງເຂດວຽກງານການກໍ່ສ້າງຄວາມອາດສາມາດດ້ານສິ່ງແວດລ້ອມ. ໂຄງການຈະບໍ່ສະຫນັບສະຫນູນບົດສະຫນີທີ່ມີກິດຈະກຳຄ້າຍຄືກັບໂຄງການອື່ນໆ ທີ່ດຳເນີນງານຢູ່ແລ້ວ;

✎ ບົດສະຫນີຈະໄດ້ຮັບການພິຈາລະນາ ຖ້າຫາກວ່າການດຳເນີນງານເຫມາະສົມກັບນະໂຍບາຍບູລິມາສິດດ້ານສິ່ງແວດລ້ອມ;

✎ ມີຄວາມຫມັ້ນໃຈສູງຕໍ່ຄວາມພຽບພ້ອມທາງດ້ານວັດຖຸ ແລະ ແຮງງານໃນການຈັດຕັ້ງປະຕິບັດ ໂຄງການຍ່ອຍ;

✎ ລະບຸຜົນສຳເລັດ ແລະ ຜົນໄດ້ຮັບ ໃຫ້ຈະແຈ້ງ ແລະ ສາມາດປະເມີນຜົນໄດ້;

✎ ມີການສຶກສາຄວາມເປັນໄປໄດ້ ໃນການບັນລຸຜົນສຳເລັດ ຈາກທຶນຮອນ

